| ຂໍ້ມູນທີ່ໄດ້ຮັບຈາກຂະແໜງການທີ່ກ່ຽວຂ້ອງ | |
|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດລົງທຶນ ສຳລັບ ທຸລະກິດສຳປະທານ |
| **ປະເພດເອກະສານ** | ອື່ນໆ |
| **ວັນທີແກ້ໄຂຂໍ້ມູນລ່າສຸດ** | 19.01.2018 |
| **ພາກສ່ວນຮັບຜິດຊອບ** | ກົມສົ່ງເສີມການລົງທຶນ |
| **ຜູ້ທີ່ສາມາດຍື່ນຂໍເອກະສານ** | ນິຕິບຸກຄົນ ທີ່ມີຈຸດປະສົງລົງທຶນໃນກິດຈະການ ສຳປະທານ ຊຶ່ງແມ່ນ ກິດຈະການທີ່ຜູ້ລົງທຶນໄດ້ຮັບອະນຸຍາດໃນການສຳປະທານຈາກລັດ ເພື່ອພັດທະນາ ແລະ ດຳເນີນທຸລະກິດໃດໜຶ່ງ ເຊັ່ນ ການສຳປະທານທີ່ດິນ, ການສຳປະທານສາຍການບິນ, ການຂຸດຄົ້ນບໍ່ແຮ່ ແລະ ການພັດທະນາແຫລ່ງພະລັງງານໄຟຟ້າ. |
| **ເງື່ອນໄຂໃນການຂໍເອກະສານ** | 1. ຜູ້ຮ້ອງຂໍຕ້ອງມີປະສົບການ ແລະ ໄດ້ຮັບຜົນສຳເລັດທາງດ້ານທຸລະກິດ ໂດຍມີການຢັ້ງຢືນຈາກ ອົງການທີ່ກ່ຽວຂ້ອງ, ຕ້ອງມີຖານະທາງດ້ານການເງິນ ຫລື ແຫລ່ງທຶນ ຊຶ່ງໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫລື ຕ່າງປະເທດ 2. ຜູ້ຮ້ອງຂໍ ຕ້ອງມີເງື່ອນໄຂ ແລະ ຄຸນະສົມບັດ ຕາມທີ່ກຳນົດໄວ້ສະເພາະ ສຳລັບ ແຕ່ລະປະເພດ ກິດຈະການທີ່ຈະລົງທຶນ ເຊັ່ນ ກິດຈະການໄຟຟ້າ, ກິດຈະການບໍ່ແຮ່3. ຕ້ອງມີທຶນຈົດທະບຽນ ບໍ່ຫລຸດ 30 ສ່ວນຮ້ອຍຂອງທຶນທັງໝົດ |

| ກົດໝາຍ ແລະ ນິຕິກຳອື່ນໆ ທີ່ກ່ຽວຂ້ອງ | | | |
|---|---|---|---|
| **ຊື່** | **ເລກທີ** | **ລົງວັນທີ** | **ໝາຍເຫດ** |
| ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ (ສະບັບປັບປຸງ) | 14/ສພຊ | 17.11.2016 | ໝວດທີ 4 ກິດຈະການການລົງທຶນສຳປະທານ (ມາດຕາ 41 ຫາມາດຕາ 46)ມາດຕາ 52 |

| ໃບອະນຸຍາດດຳເນີນການ ຫລື ເອກະສານທີ່ຈຳເປັນ ຫລື ຕິດພັນ | | |
|---|---|---|
| **ຊື່** | **ປະເພດ** | **ໝາຍເຫດ** |
| ${SUPPORT_NAME} | ${SUPPORT_TYPE} | ${SUPPORT_COMMENT} |

| ເອກະສານທີ່ຕ້ອງປະກອບສຳລັບການຍື່ນຂໍເອກະສານ | | |
|---|---|---|
| **ຊື່ເອກະສານ** | **ປະເພດເອກະສານ** | **ຕົວຢ່າງເອກະສານ** |
| ${ATTACHMENT_NAME} | ${ATTACHMENT_TYPE} | ${ATTACHMENT_FILE} |

| ເອກະສານທີ່ຕ້ອງປະກອບສຳລັບການຕໍ່ອາຍຸ | | |
|---|---|---|
| ຊື່ເອກະສານ | ປະເພດເອກະສານ | ຕົວຢ່າງເອກະສານ |

| | | |
|---|---|---|
| ${ATTACHMENT_NAME_RENEW} | ${ATTACHMENT_TYPE_RENEW} | ${ATTACHMENT_FILE_RENEW} |

| ຮູບແບບການຍື່ນເອກະສານ | | |
|---|---|---|
| **ການຍື່ນເອກະສານ** | ຢູ່ທີ່ຫ້ອງການເຈົ້າໜ້າທີ່ | |
| **ທີ່ຢູ່ຂອງພາກສ່ວນທີ່ຮັບຜິດຊອບ** | ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ | |
| **ໄລຍະເວລາໃນການພິຈາລະນາຄໍາຮ້ອງ (ວັນ)** | 65 | 1. ຫ້ອງການບໍລິການປະຕູດຽວ ຕ້ອງສົ່ງເອກະສານຄໍາຮ້ອງໄປຂໍຄໍາເຫັນນໍາຂະແໜງການ ແລະ ທ້ອງຖິ່ນ ພາຍໃນ 2 ວັນລັດຖະການ ເພື່ອຄົ້ນຄວ້າ ຕອບພາຍໃນ 30 ວັນລັດຖະການ2. ພາຍຫລັງມີຄໍາເຫັນຈາກຂະແໜງການ, ນໍາສະເໜີການລົງທຶນຕໍ່ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນ ພິຈາລະນາຫລັກການ ໃນ 30 ວັນລັດຖະການ3. ພາຍຫລັງຄະນະກໍາມະການ ຕົກລົງເຫັນດີທາງດ້ານຫລັກການແລ້ວ, ຫ້ອງການບໍລິການປະຕູດຽວ ຈັດກອງປະຊຸມເຈລະຈາບົດບັນທຶກຄວາມເຂົ້າໃຈ ຫລື ສັນຍາ ແລະ ໃຫ້ຜູ້ລົງທຶນມາລົງນາມ4. ພາຍຫລັງເຊັນສັນຍາສໍາປະທານແລ້ວ, ຫ້ອງການບໍລິການປະຕູດຽວ ຕ້ອງອອກໃບອະນຸຍາດ ພາຍໃນເວລາ 3 ວັນລັດຖະການ |

| ການຕໍ່ອາຍຸເອກະສານ | |
|---|---|
| **ເອກະສານມີກໍານົດອາຍຸ ຫຼື ບໍ່?** | **ໃບອະນຸຍາດມີອາຍຸການນໍາໃຊ້ຈັກເດືອນ?** |
| ມີ | 600 |
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸເອກະສານ** | |
| **ຂັ້ນຕອນ ແລະ ເງື່ອນໄຂສໍາລັບການຕໍ່ອາຍຸໃບອະນຸຍາດ** | ອາຍຸການລົງທຶນໃນກິດຈະການສໍາປະທານ ແມ່ນ ອີງຕາມປະເພດ, ຂະໜາດ, ມູນຄ່າການລົງທຶນ, ເງື່ອນໄຂ, ບົດວິພາກເສດຖະກິດ-ເຕັກນິກຂອງກິດຈະການ ຕາມກົດໝາຍທີ່ກ່ຽວຂ້ອງ ແຕ່ສູງສຸດ ບໍ່ໃຫ້ເກີນ 50 ປີ ຈະຕໍ່ໄດ້ຕາມການຕົກລົງຂອງລັດຖະບານ ຫລື ສະພາແຫ່ງຊາດ ຫລື ສະພາປະຊາຊົນຂັ້ນແຂວງ ຕາມຂອບເຂດສິດ |

| ຄ່າທໍານຽມສໍາລັບການຍື່ນຂໍເອກະສານ |
|---|

| ມີຄ່າໃບຄຳຮ້ອງ ຫຼື ບໍ່? | ຄ່າບໍລິການ | ຄ່າທຳນຽມທາງວິຊາການ | ຄ່າແບບຟອມ ຄຳຮ້ອງ | ຄ່າໃຊ້ຈ່າຍທັງໝົດ |
|---|---|---|---|---|
| ມີ | 0.00 | 320000.00 | 50000.00 | 370000.00 |
| **Comments** | ກົດໝາຍກ່ຽວຂ້ອງ (ລວມທັງ ລັດຖະບັນຍັດປະທານປະເທດ) ບໍ່ໄດ້ລະບຸຄ່າທຳນຽມ ແລະ ຄ່າບໍລິການໄວ້ ແຕ່ເຈົ້າໜ້າທີ່ແຈ້ງວ່າ ຄ່າແບບຟອມ ແລະ ຄ່າທຳນຽມທັງໝົດ ແມ່ນ 370,000 ກີບ | | | |
| **ຄ່າບໍລິການເພີ່ມເຕີມ** | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນຄ່າ ທຳນຽມເພີ່ມເຕີມ** | | | | |

| **ຄ່າທຳນຽມສຳລັບການຂໍຕໍ່ອາຍຸເອກະສານ** | | | | |
|---|---|---|---|---|
| **ມີຄ່າຕໍ່ອາຍຸເອກະສານ ຫຼື ບໍ່?** | **ຄ່າບໍລິການ** | **ຄ່າທຳນຽມທາງວິຊາການ** | **ຄ່າໃບຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ມີ | 0.00 | 100000.00 | 0.00 | 100000.00 |
| **ຄຳເຫັນ** | ກົດໝາຍກ່ຽວຂ້ອງ (ລວມທັງ ລັດຖະບັນຍັດປະທານປະເທດ) ບໍ່ໄດ້ລະບຸຄ່າທຳນຽມ ແລະ ຄ່າບໍລິການໄວ້ ແຕ່ເຈົ້າໜ້າທີ່ແຈ້ງວ່າ ຄ່າທຳນຽມທັງໝົດ ສຳລັບການຕໍ່ອາຍຸ ແມ່ນ 100,000 ກີບຕໍ່ເທື່ອ. | | | |
| ຄ່າໃຊ້ຈ່າຍອື່ນໆ | | | | |
| ລາຍການຄ່າໃຊ້ຈ່າຍອື່ນໆ | | | | |
| ບໍ່ມີ | 0.00 | 0.00 | 0.00 | 0.00 |
| **ຄຳ ເຫັນກ່ຽວກັບຄ່າ ທຳນຽມຕໍ່ອາຍຸເພີ່ມເຕີມ** | | | | |